# ໂຄງການຊ່ວຍເຫຼືອດ້ານພະລັງງານແກ່ຜູ້ມີລາຍໄດ້ຕ່ຳ ແຫ່ງຣັຖຄາຊາສ (LIEAP)

## ເງື່ອນໄຂພື້ນຖານສຳຫຼັບ ຜູ້ໄດ້ຮັບການຊ່ວຍເຫຼືອຈາກໂຄງການຊ່ວຍເຫຼືອດ້ານພະລັງານແກ່ຜູ້ມີລາຍໄດ້ຕ່ຳ

ມັງກອນ 2010

ໂຄງການຊ່ວຍເຫຼືອດ້ານພະລັງງານແກ່ຜູ້ມີລາຍໄດ້ຕ່ຳ (LIEAP) ແມ່ນກອງທຶນຈາກຣັຖະບານກາງທີ່ຊ່ວຍໃຫ້ຄົວເຮືອນສາມາດຈ່າຍຄ່າໃຊ້ຈ່າຍໃນສ່ວນຂອງພະລັງງານທີ່ໃຊ້ໃນເຮືອນໂດຍການໃຫ້ **ຄວາມຊ່ວຍເຫຼືອໜຶ່ງເທື່ອຕໍ່ປີ.**

## ໄລຍະເວລາຍື່ນໃບສະມັກ

**ໄລຍະເວລາຍື່ນໃບສະມັກ ສຳຫຼັບປີ 2010 ແມ່ນເລີ່ມຈາກເດືອນມັງກອນ ວັນທີ 19 ຫາ ເດືອນມີນາ ວັນທີ 31, 2010.**

**ພິມ (PDF) ຮ່າງໃບສະມັກ LIEAP**

ຂໍ້ມູນຂ້າງລຸ່ມນີ້ແມ່ນສະຫຼຸບຫຍໍ້ທີ່ອະທິບາຍສິດພື້ນຖານໃນການຮັບການຊ່ວຍເຫຼືອຈາກ LIEAP. ຂໍ້ມູນເພີ່ມເຕີມສາມາດຫາໄດ້ໂດຍຕິດຕໍ່ຫ້ອງການບໍລິການທາງສັງຄົມ ແລະ ການຟື້ນຟູໃນທ້ອງຖິ່ນຂອງທ່ານພາຍໃນເວລາສາມເດືອນຂອງການສະມັກ.

### ບຸກຄົນທີ່ມີສິດ

ຜູ້ທີ່ມີສິດໄດ້ຮັບການຊ່ວຍເຫຼືອຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1) ຜູ້ໃຫຍ່ທີ່ມີທີ່ຢູ່ ແລະ ເປັນຜູ້ທີ່ຮັບຜິດຊອດຄ່າໃຊ້ຈ່າຍດ້ານເຄື່ອງເຮັດຄວາມຮ້ອນໃນບ່ອນທີ່ໂຕເອງອາໃສຢູ່ ບໍ່ວ່າຈະເປັນການຈ່າຍໃຫ້ເຈົ້າຂອງບ້ານຫຼື ບໍລິສັດພະລັງງານກໍ່ຕາມ.

2) ຜູ້ສະມັກຕ້ອງສະແດງໃຫ້ເຫັນປະວັດການຈ່າຍຄ່າພະລັງງານພື້ນຖານຫຼ້າສຸດ.

3) ລາຍຮັບລວມ (ກ່ອນຫັກລົບ) ຂອງຜູ້ທີ່ຢູ່ໃນທີ່ຢູ່ທີ່ບໍ່ຫຼາຍກວ່າ130% ຂອງລະດັບຄວາມຍາກຈົນຂອງຣັຖບານກາງອີງຕາມຕົວເລກແນະນຳດັ່ງລຸ່ມນີ້:

| **ຈຳນວນຄົນ ທີ່ຢູ່ໃນທີ່ຢູ່** | **ລາຍຮັບສູງສຸດ** |
| --- | --- |
| 1 | $1,174 |
| 2 $ | 1,579 |
| 3 $1,9 | 84 |
| 4 $ | 2,389 |
| 5 $ | 2,794 |
| 6 $ | 3,200 |
| 7 $ | 3,605 |
| 8 $ | 4,010 |
| 9 $ | 4,416 |
| 10 $ | 4,822 |
| 11 $ | 5,228 |
| 12 $ | 5,634 |
| + | ເພີ່ມຈາກນີ້ຈະໄດ້ຮັບເພີ່ມຜູ້ລະ $405 |

**ຜົນປະໂຫຍດ**

ຈຳນວນເງິນທີ່ໄດ້ຮັບແຕກຕ່າງຕາມປັດໃຈດັ່ງນີ້: 1) ລາຍໄດ້ໃນຄົວເຮືອນ, 2) ຈຳນວນຄົນທີ່ຢູ່ໃນທີ່ຢູ່, 3) ປະເພດທີ່ຢູ່ອາໃສ, 4) ປະເພດພະລັງງານໃຫ້ຄວາມຮ້ອນ, ແລະ 5) ອັດຕາການໃຊ້.

ສຳຫຼັບຂໍ້ມູນເພີ່ມເຕີມ ຫຼື ຂໍໃບສະມັກກະຣຸນາໂທມາທີ່ 1-800-432-0043.